# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ...ໜ້າ 01-06

**II.** ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ.................................................... ໜ້າ 07-08

**III.** ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ.................................................. ໜ້າ 09-14


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ພຶດສະພາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 15/05/2023, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມກາງສະໄໝ ພາຍໃຕ້ການເປັນປະທານຂອງ ສະຫາຍ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ. ກອງປະຊຸມ ໄດ້ປະກອບຄຳຄິດຄຳເຫັນຕໍ່ບົດລາຍງານການເມືອງ, ຕີລາຄາຄືນການນຳພາ-ຊີ້ນຳຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຕໍ່ບັນດາວຽກງານທີ່ສຳຄັນ ໃນໄລຍະ 5 ປີ ແຕ່ປີ 2021-2026, ປະເມີນການປະຕິບັດມະຕິຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 13 ຂອງພັກ ກໍຄືການຕີລາຄາຄືນບັນດາຂໍ້ກຳນົດ, ຜົນສຳເລັດ ແລະ ບັນດາຈຸດຄົງຄ້າງຢ່າງຄົບຖ້ວນ ແລະ ຮອບດ້ານ, ຜັນຂະຫຍາຍການປະຕິບັດວຽກງານການເມືອງຂອງຄະນະບໍລິຫານງານສູນກາງພັກ ຊຸດທີ 13.

ວັນທີ 22/05/2023, ທ່ານ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບ ທ່ານ Dimtry Medvedev, ປະທານພັກລັດເຊຍເອກະພາບ, ຮອງປະທານສະພາຄວາມໝັ້ນຄົງລັດເຊຍ ໃນໂອກາດຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ ລະຫວ່າງວັນທີ 21-23/5/2023. ທ່ານ ຫງວຽນ ຟູຈອງ ໄດ້ກ່າວວ່າ ຍາມໃດ ຫວຽດນາມ ກໍຖືສຳຄັນມິດຕະພາບທີ່ເປັນມູນເຊື້ອ, ເປັນຄູ່ຮ່ວມມືຍຸດສາດຮອບດ້ານລະຫວ່າງ ຫວຽດນາມ-ລັດເຊຍ. ສະແດງຄວາມຊົມເຊີຍຕໍ່ບັນດາຜົນງານທີ່ລັດເຊຍຍາດມາໄດ້ພາຍໃຕ້ການນຳພາຂອງ ທ່ານ Vladimir Putin ແລະ ພັກລັດເຊຍເອກະພາບ. ທ່ານ Medvedev ໄດ້ສະແດງຄວາມຊົມເຊີຍຫວຽດນາມໃນການພັດທະນາປະເທດຊາດຢ່າງຕັ້ງໜ້າ ແລະ ສະແດງຄວາມຂອບໃຈຕໍ່ການຕ້ອນຮັບທີ່ອົບອຸ່ນມາຍັງພັກ, ລັດ ແລະ ປະຊາຊົນຫວຽດນາມ. ພ້ອມດຽວກັນ, ໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບການຢູ່ລັດເຊຍ, ການພົວພັນຂອງສອງປະເທດ; ພິເສດແມ່ນການຮ່ວມມືລະຫວ່າງພັກລັດເຊຍເອກະພາບ ແລະ ພັກກອມມູນິດຫວຽດນາມ. ເຫັນດີສືບຕໍ່ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈທາງດ້ານການເມືອງຜ່ານການຢ້ຽມຢາມ ແລະ ພົບປະຂອງການນຳຂັ້ນສູງ, ຍົກສູງການພົວພັນຮ່ວມມືທາງດ້ານເສດຖະກິດ, ວິທະຍາສາດ-ເຕັກໂນໂລຊີ, ວັດທະນະທຳ, ການສຶກສາ ແລະ ອື່ນໆ.

ວັນທີ 04/05/2023, ທີ່ສຳນັກງານສູນກາງພັກ, ຄະນະຜູ້ແທນຂັ້ນສູງພັກກອມມູນິດຫວຽດນາມ ນຳໂດຍ ສະຫາຍ ນາງ ເຈືອງທີມາຍ, ກຳມະການກົມການເມືອງ, ຜູ້ປະຈຳການຄະນະເລຂາທິການ, ຫົວໜ້າຄະນະຈັດຕັ້ງສູນກາງພັກກອມມູນິດຫວຽດນາມ ໄດ້ພົບປະສອງຝ່າຍ ກັບຄະນະຜູ້ແທນຂັ້ນສູງພັກກອມມູນິດກູບາ. ສອງຝ່າຍ ໄດ້ຕີລາຄາການຮ່ວມມື ໄລຍະປີ 2018-2023 ຂອງສອງພັກ, ພ້ອມທັງກຳນົດຈຸດສຸມ ແລະ ວິທີການຮ່ວມມື ລະຫວ່າງ ສອງພັກໃນຕໍ່ໜ້າ. ສອງຝ່າຍ ເຫັນດີເພີ່ມທະວີການພົບປະແລກປ່ຽນທຸກຂັ້ນ ແລະ ຕີລາຄາສູງຕໍ່ຜົນສຳເລັດຂອງກອງປະຊຸມສຳມະນາທິດສະດີ ຄັ້ງທີ V ລະຫວ່າງ ສອງພັກ, ການແລກປ່ຽນບົດຮຽນປະສົບການ, ທິດສະດີ ແລະ ພຶດຕິກຳຕົວຈິງ ໃນການກໍ່ສ້າງສັງຄົມນິຍົມ ແລະ ການຄຸ້ມຄອງລັດໃນຂົງເຂດຕ່າງໆໃນໄລຍະຜ່ານມາ. ການຢ້ຽມຢາມຄັ້ງນີ້, ສອງພັກໄດ້ເປັນສັກຂີພິຍານໃນການເຊັນບົດບັນທຶກການປຶກສາຫາລື ແລະ ຮ່ວມມື ໄລຍະປີ 2023-2028 ລະຫວ່າງ ພັກກອມມູນິດຫວຽດນາມ ແລະ ພັກກອມມູນິດກູບາ.

### 2). ພັກກອມມູນິດຈີນ

ວັນທີ 06/05/2023, ທ່ານ ສີຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ສົ່ງສານຊົມເຊີຍເຖິງສົມເດັດ Charles III, ກະສັດຂອງອັງກິດ ແລະ ພະລາຊະນີ Camilla Parker Bowles, ໃນໂອກາດຂຶ້ນຄອງຣາຊະບັນລັງ. ສານຊົມເຊີຍບາງຕອນລະບຸວ່າ ປັດຈຸບັນໂລກກຳລັງປະເຊີນກັບການປ່ຽນແປງຢ່າງໄວວາ ແລະ ສັບຊ້ອນ, ປະຊາຄົມໂລກປະເຊີນກັບສິ່ງທ້າທາຍທີ່ບໍ່ເຄີຍມີມາກ່ອນ, ຈີນ-ອັງກິດ ລ້ວນແຕ່ແມ່ນສະມາຊິກຖາວອນຂອງສະພາຄວາມໝັ້ນຄົງ ສປຊ ຄວນຮ່ວມກັນຊຸກຍູ້ສັນຕິພາບ, ການຮ່ວມມື, ການພັດທະນາ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ສປ ຈີນ ກັບ ອັງກິດ ຄວນເພີ່ມທະວີໄມຕີຈິດມິດຕະພາບລະຫວ່າງປະຊາຊົນ ເປີດກວ້າງການຮ່ວມມື, ລົງເລິກການແລກປ່ຽນທາງດ້ານວັດທະນະທຳ, ສ້າງຄວາມຜາສຸກໃຫ້ປະຊາຊົນສອງຊາດ ແລະ ທົ່ວໂລກ.

ວັນທີ 5/5/2023, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ, ຫົວໜ້າຄະນະກຳມະການການເງິນ ແລະ ເສດຖະກິດສູນກາງຈີນ ໄດ້ເປັນປະທານຈັດກອງປະຊຸມຄັ້ງທຳອິດ ຂອງຄະນະກຳມະການການເງິນ ແລະ ເສດຖະກິດສູນກາງ ສະໄໝທີ 20. ສະຫາຍ ສີຈິ້ນຜິງ ໄດ້ເນັ້ນໜັກວ່າ: ຕ້ອງເອົາໃຈໃສ່ປະຕິບັດວຽກງານຂອງຄະນະກຳມະການການເງິນ ແລະ ເສດຖະກິດສູນກາງຊຸດໃໝ່ເປັນຢ່າງດີ, ຄົ້ນຄວ້າບັນຫາກ່ຽວກັບການເລັ່ງລັດສ້າງລະບົບຂະແໜງການທັນເປັນທັນສະໄໝ, ຄົ້ນຄວ້າບັນຫາການຖືເອົາການພັດທະນາບຸກຄະລາກອນ ໃຫ້ມີຄຸນນະພາບສູງເປັນເສົາຄ້ຳຂອງຄວາມທັນສະໄໝແບບຈີນ; ສືບຕໍ່ເສີມຂະຫຍາຍບົດບາດ ໃນການວາງນະໂຍບາຍທີ່ສຳຄັນດ້ານວຽກງານເສດຖະກິດ, ເພີ່ມທະວີ ແລະ ປັບປຸງການນຳພາຕາມຫຼັກການລວມສູນຂອງສູນກາງພັກກອມມູນິດຈີນ ທີ່ມີຕໍ່ວຽກງານເສດຖະກິດ; ສຸມໃສ່ພັດທະນາເສດຖະກິດຕົວຈິງ ໃຫ້ມີຄຸນນະພາບສູງເປັນເສົາຄ້ຳຂອງຄວາມທັນສະໄໝແບບຈີນ.

ວັນທີ 03/05/2023, ທ່ານ ສິນ ກ່າງ, ລັດຖະມົນຕີຕ່າງປະເທດ ສປ ຈີນ ໄດ້ຢ້ຽມຢາມມຽນມາ ຢ່າງເປັນທາງການ ແລະ ໄດ້ພົບປະກັບ ທ່ານ ມິນ ອອງລາຍ, ຜູ້ນຳລັດຖະບານທະຫານມຽນມາ. ທ່ານ ສິນ ກ່າງ ໄດ້ກ່າວວ່າ ຈີນ ສະໜັບສະໜູນການພັດທະນາ, ການຫັນປ່ຽນທາງການເມືອງຂອງມຽນມາ, ຊຸກຍູ້ສັນຕິພາບພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍ. ພ້ອມນີ້, ໄດ້ສະເໜີການຮ່ວມມືກັບມຽນມາໃນການສ້າງປະຊາຄົມຄູ່ຮ່ວມຊະຕາກຳຈີນ-ມຽນມາ ແລະ ຮຽກຮ້ອງໃຫ້ປະຊາຄົມໂລກເຄົາລົບອະທິປະໄຕ ແລະ ຊ່ວຍເຫຼືອມຽນມາໃຫ້ບັນລຸສັນຕິພາບ ແລະ ຄວາມປອງດອງຊາດ. ທ່ານ ມິນ ອອງລາຍ ກ່າວວ່າ ເກືອບ 70 ປີ ທີ່ມຽນມາ-ຈີນ ສ້າງສາຍພົວພັນການທູດຮ່ວມກັນ, ສອງປະເທດຮັກສາໄດ້ຂະບວນການພັດທະນາຢ່າງສະເໝີຕົ້ນສະເໝີປາຍ. ມຽນມາ ຊົມເຊີຍຕໍ່ຈຸດປະສົງຂອງ ສປ ຈີນ ໃນການແກ້ໄຂບັນຫາພາຍໃນມຽນມາ ຢ່າງຈິງຈັງ.

ວັນທີ 18-19/05/2023, ກອງປະຊຸມສຸດຍອດ ຈີນ-ອາຊີກາງ ໄດ້ຈັດຂຶ້ນຢູ່ນະຄອນຊີອ່ານ, ແຂວງສ້ານຊີ, ສປຈີນ; ມີຜູ້ນຳຂອງ 5 ປະເທດໃນອາຊີກາງ (ກາຊັກສະຖານ, ກຽກກິດສະຖານ, ຕັດຈິກິດສະຖານ, ຕວັກເມນິດສະຖານ ແລະ ອຸດສະເບກິດສະຖານ) ເຂົ້າຮ່ວມ. ທ່ານ ສີຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ໃນນາມເປັນເຈົ້າພາບ ແລະ ເປັນປະທານກອງປະຊຸມ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ລະຫວ່າງ ສປ ຈີນ ກັບບັນດາປະເທດອາຊີກາງ ແມ່ນນັບມື້ຂະຫຍາຍຕົວໄປໃນທາງບວກ ແລະ ມີສາຍພົວພັນການທູດທີ່ດີ, ບັນດາປະເທດດັ່ງກ່າວ ລ້ວນແຕ່ເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ກັບ ສປ ຈີນ, ຮ່ວມມືກັນ ພັດທະນາໜຶ່ງແລວ ໜຶ່ງເສັ້ນທາງ ປະກອບສ່ວນແກ່ການພັດທະນາເສດຖະກິດ, ສົ່ງເສີມການໄປມາຫາສູ່ ລະຫວ່າງ ສປ ຈີນ-ບັນດາປະເທດອາຊີກາງ ຫຍັບເຂົ້າຫາກັນ; ທັງເປັນພື້ນຖານ ແກ່ການເຊື່ອມໂຍງກັບທຸກປະເທດ ໃນພາກພື້ນ.

ວັນທີ 20/05/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ສົ່ງສານຊົມເຊີຍເຖິງ ທ່ານ Salman Abdulaziz Al Saud, ເຈົ້າຊີວິດອາຣັບບີ ຊາອຸດິດ, ປະທານກອງປະຊຸມສັນນິບາດອາຣັບ ຄັ້ງທີ 32. ເນື້ອໃນສານບາງຕອນລະບຸວ່າ ກອງປະຊຸມສັນນິບາດອາຣັບ ໄດ້ຊຸກຍູ້ໃຫ້ຂົງເຂດຕາເວັນອອກກາງຮ່ວມກັນສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຊຸກຍູ້ສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາຂອງພາກພື້ນ. ອາຣັບບີ ຊາອຸດິດ ແມ່ນກຳລັງສຳຄັນຂອງໂລກທີ່ມີຫຼາຍຂົ້ວ, ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເພີ່ມທະວີຄວາມສາມັກຄີ, ຈີນ ຍິນດີຮ່ວມມືກັບບັນດາປະເທດອາຣັບ ເພື່ອເສີມຂະຫຍາຍນ້ຳໃຈມິດຕະພາບລະຫວ່າງ ຈີນ-ອາຣັບ, ຈັດຕັ້ງປະຕິບັດບັນດາໝາກຜົນຂອງກອງປະຊຸມສຸດຍອດຈີນ- ອາຣັບ ຄັ້ງທີ I, ສ້າງຄູ່ຮ່ວມມືຍຸດທະສາດ ຈີນ-ອາຣັບ ໃຫ້ຢູ່ໃນລະດັບສູງກວ່າເກົ່າ, ສືບຕໍ່ສົ່ງເສີມມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປ ຈີນ-ອາຣັບ.

**3). ພັກແຮງງານເກົາຫຼີ**

ວັນທີ 6 ພຶດສະພາ 2023, ບັນດາເຈົ້າໜ້າທີ່ຈາກສູນກາງພັກແຮງງານເກົາຫຼີ ສົມທົບກັບເຈົ້າໜ້າທີ່ຂັ້ນທ້ອງຖິ່ນຂອງແຂວງ ໄດ້ຈັດຕັ້ງຜັນຂະຫຍາຍ ມະຕິຂອງປະຊຸມຄົບຄະນະຄັ້ງທີ 7 ສະໄໝທີ 8 ຂອງພັກແຮງງານເກົາຫຼີ ໂດຍໄດ້ລົງກວດກາຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການການພັດທະນາຊົນນະບົດຢູ່ບັນດາແຂວງທາງພາກຕາເວັນອອກຂອງ ສປປ ເກົາຫຼີ ເປັນຕົ້ນ ແຂວງ Phuongan ແລະ ແຂວງ Hwanghae, ເຊິ່ງສູນກາງພັກແຮງງານເກົາຫຼີ ໄດ້ສົ່ງຄະນະຊ່ຽວຊານດ້ານກະສິກຳ ໄປຝຶກອົບຮົມໃຫ້ປະຊາຊົນ ໃນນັ້ນແມ່ນວິທີການປູກຝັງແບບວິທະຍາສາດ ໃຫ້ແທດເໝາະກັບສະພາບອາກາດໃນພື້ນທີ່ດັ່ງກ່າວ ໂດຍສະເພາະ ການປູກສາລີ ແລະ ເຂົ້າບາເລ.

ວັນທີ 9 ພຶດສະພາ 2023, ສະຫາຍ Choe Son Hui, ລັດຖະມົນຕີຕ່າງປະເທດ ສປປ ເກົາຫຼີ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ນາງ Wan Yajun, ເອກອັກຄະລັດຖະທູດ ສປ ຈີນ ຄົນໃໝ່ ປະຈໍາ ສປປ ເກົາຫຼີ. ຊຶ່ງ ສອງຝ່າຍ ໄດ້ຕີລາຄາສູງຕໍ່ການພົວພັນການທູດທີ່ເປັນມູນເຊື້ອມາແຕ່ດົນນານ ລະຫວ່າງ ສປປ ເກົາຫຼີ ແລະ ສປ ຈີນ. ສະຫາຍ ນາງ Wan Yajun ໄດ້ໃຫ້ຄໍາໝັ້ນສັນຍາຈະເປັນຂົວຕໍ່ໃນການເພີ່ມທະວີສາຍພົວພັນກັບ ສປປ ເກົາຫຼີ.

**3). ພັກກອມມູນິດກູບາ**

ວັນທີ 05/05/2023, ກູບາ ໄດ້ຈັດພິທີສະເຫຼີມສະຫຼອງວັນກໍາມະກອນສາກົນ ໂດຍການເຂົ້າຮ່ວມຂອງ ສະຫາຍ Raúl Castro Ruz, ອະດີດເລຂາທິການທີໜຶ່ງ ພັກກອມມູນິດກູບາ ແລະ ສະຫາຍ Miguel Díaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ແລະ ປະຊາຊົນກູບາຫຼາຍພັນຄົນຈາກສະຫະພັນກໍາມະບານ, ອົງການຈັດຕັ້ງທາງສັງຄົມ ໄດ້ເຂົ້າຮ່ວມພິທີດັ່ງກ່າວທີ່ໄດ້ຈັດຂຶ້ນ ຢູ່ ນະຄອນຫຼວງລາຮາວານ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ໄລຍະເດືອນພຶດສະພາ 2023 ໄດ້ມີຫຼາຍເຫດການທີ່ພົ້ນເດັ່ນ ໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ ເຊັ່ນ:

-ວັນທີ 02/05/2023, ທ່ານ Fernando Marcos Jr, ປະທານາທິບໍດີຟີລິບປິນ ໄດ້ເດີນທາງຢ້ຽມຢາມອາເມລິກາ ເປັນເວລາ 04 ວັນ ແລະ ໄດ້ພົບປະກັບ ທ່ານ Joe Biden, ປະທານາທິບໍດີອາເມລິກາ. ສອງຝ່າຍໄດ້ເຊັນຂໍ້ຕົກລົງຮ່ວມມືດ້ານການປ້ອງກັນປະເທດສະບັບໃໝ່ ທີ່ລວມເຖິງການອະນຸຍາດໃຫ້ກອງທັບອາເມລິກາ ສາມາດເຄື່ອນໄຫວທາງການທະຫານຢູ່ຖານທັບຂອງຟີລິບປິນ ເພີ່ມຕື່ມອີກ 04 ແຫ່ງ, ທັງໝົດ 09 ແຫ່ງ.

- ວັນທີ 07/05/2023, ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ຢ້ຽມຢາມ ສ.ເກົາຫຼີ ຢ່າງເປັນທາງການ ພາຍຫຼັງທີ່ຜູ້ນໍາ ສ.ເກົາຫຼີ ໄດ້ຢ້ຽມຢາມຍີ່ປຸ່ນ ໃນເດືອນ 03/2023 ຜ່ານມາ ແລະ ໄດ້ພົບປະກັບ ທ່ານ Yoon Suk Yeol, ປະທານາທິບໍດີ ສ.ເກົາຫຼີ. ສອງຝ່າຍໄດ້ປຶກສາຫາລືໃນບັນຫາທີ່ໄດ້ແລກປ່ຽນຜ່ານມາ ເປັນຕົ້ນດ້ານຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ, ຄວາມໄວ້ເນື້ອເຊື່ອໃຈ ແລະ ອື່ນໆ. ທ່ານ Yoon Suk Yeol ໄດ້ກ່າວວ່າການຢ້ຽມຢາມຄັ້ງນີ້ມີຄວາມໝາຍສໍາຄັນຢ່າງຍິ່ງ ສະແດງໃຫ້ເຫັນມິດຕະພາບ ແລະ ຄວາມເຊື່ອໝັ້ນທີ່ສອງຝ່າຍ ຈະລົງເລິກການຮ່ວມມືໃຫ້ເລິກເຊິ່ງກວ່າເກົ່າ. ທ່ານ Kishida ໄດ້ສະແດງຄວາມເສຍໃຈຕໍ່ເຫດການໃນປະຫວັດສາດທີ່ທະຫານຍີ່ປຸ່ນໄດ້ກະທໍາຕໍ່ ສ.ເກົາຫຼີ ສະໄໝສົງຄາມລະຫວ່າງປີ 1910-1945, ແຕ່ວ່າ ສອງຝ່າຍ ຄວນກ້າວຂ້າມບັນຫາດັ່ງກ່າວ ແລະ ຫັນໄປຮ່ວມມືກັນໃຫ້ຫຼາຍຂຶ້ນເພື່ອພັດທະນາປະເທດໄປສູ່ອະນາຄົດທີ່ກ້າວໜ້າ.

- ວັນທີ 9-11/05/2023, ອິນໂດເນເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 42 ພາຍໃຕ້ຄໍາຂວັນ “ອາຊຽນມີຄວາມສໍາຄັນ: ສູນກາງແຫ່ງການຈະເລີນເຕີບໂຕ”. ບັນດາຜູ້ນໍາອາຊຽນ ໄດ້ສະແດງຄວາມຍິນດີຕໍ່ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ ຮອດປີ 2025; ປຶກສາຫາລືກ່ຽວກັບການສືບຕໍ່ສ້າງປະຊາຄົມອາຊຽນໃຫ້ເຂັ້ມແຂງ; ຮັບຊາບຄວາມຄືບໜ້າຂອງການຮ່າງວິໄສທັດປະຊາຄົມອາຊຽນ ຫຼັງປີ 2025; ໄດ້ປຶກສາຫາລືກ່ຽວກັບການພົວພັນຮ່ວມມືອາຊຽນກັບພາຍນອກ, ຢໍ້າຄືນຄວາມສໍາຄັນໃນການຮັກສາຄວາມເປັນແກນກາງຂອງອາຊຽນໃນໂຄງສ້າງພາກພື້ນໂດຍຜ່ານການຮ່ວມມືໃນບັນດາກົນໄກທີ່ອາຊຽນສ້າງຕັ້ງຂຶ້ນ; ເຫັນດີຈັດກອງປະຊຸມສຸດຍອດອາຊຽນ-ສະພາການຮ່ວມມືເຂດອ່າວ ໃນເດືອນຕຸລາ 2023 ທີ່ ປະເທດ ອາຣັບບີ ຊາອຸດິດ; ກອງປະຊຸມສຸດຍອດການສະເຫຼີມສະຫຼອງການພົວພັນອາຊຽນ-ຍີ່ປຸ່ນ ຄົບຮອບ 50 ປີ ວັນທີ 16-18/12/2023 ທີ່ ນະຄອນໂຕກຽວ ແລະ ກອງປະຊຸມສຸດຍອດສະໄໝພິເສດເພື່ອສະເຫຼີມສະຫຼອງການພົວພັນອາຊຽນ-ອົດສະຕຣາລີ ຄົບຮອບ 50 ປີ ວັນທີ 4-6/03/2024 ທີ່ ອົດສະຕຣາລີ. ກອງປະຊຸມຄັ້ງນີ້ ໄດ້ຊຸກຍູ້ໃຫ້ມຽນມາ ຈັດຕັ້ງປະຕິບັດບັນດາ 05 ຂໍ້ ສະເໜີຂອງຜູ້ນໍາອາຊຽນໃນສອງປີຜ່ານມາເພື່ອແກ້ໄຂສະພາບໃນມຽນມາໃຫ້ມີຄວາມສະຫງົບກໍ່ຄືໃຫ້ອາຊຽນມີສະຖຽນລະພາບ.

- ການເລືອກຕັ້ງທົ່ວໄປຂອງໄທ ຄັ້ງທີ 27 ຈັດຂຶ້ນໃນວັນທີ 14/05/2023 ເພື່ອເລືອກຕັ້ງເອົາສະມາຊິກສະພາຜູ້ແທນລາດສະດອນ (ສສ) 500 ບ່ອນນັ່ງໃນສະພາ ໂດຍມີຜູ້ສະໝັກ 1.900 ຄົນ ຈາກ 67 ພັກ. ຜົນການເລືອກຕັ້ງແມ່ນພັກກ້າວໄກ ໄດ້ຮັບ 151 ບ່ອນນັ່ງ; ພັກເພື່ອໄທ ໄດ້ 141 ບ່ອນນັ່ງ; ພັກພູມໃຈໄທ ໄດ້ 70 ບ່ອນນັ່ງ; ພັກພະລັງປະຊາລັດ ໄດ້ 41 ບ່ອນນັ່ງ; ພັກລວມໄທສ້າງຊາດ ໄດ້ 36 ບ່ອນນັ່ງ; ພັກປະຊາທິປັດ 24 ບ່ອນນັ່ງ; ພັກຊາດໄທ

ພັດທະນາ 10 ບ່ອນນັ່ງ ແລະ ພັກອື່ນໆທີ່ມີບ່ອນນັ່ງບໍ່ເຖິງ 10 ບ່ອນນັ່ງ. ປັດຈຸບັນ, ພັກກ້າວໄກ ທີ່ໄດ້ຄະແນນສຽງສ່ວນໃຫຍ່ ໄດ້ເປັນພັກນໍາພາໃນການຈັດຕັ້ງລັດຖະບານຮ່ວມກັນ ໂດຍມີທັງໝົດ 08 ພັກການເມືອງ (ພັກກ້າວໄກ, ພັກເພື່ອໄທ, ພັກປະຊາຊາດ, ພັກໄທສ້າງໄທ, ພັກເສລີລວມໄທ, ພັກເພື່ອໄທລວມພະລັງ, ພັກເປັນທໍາ ແລະ ພັກພະລັງສັງຄົມໃໝ່) ລວມໄດ້ 313 ສຽງ ທີ່ຕົກລົງຈະຈັດຕັ້ງລັດຖະບານປະສົມ. ວັນທີ 22/5/2023, 8 ພັກ ດັ່ງກ່າວ ໄດ້ຮ່ວມກັນຮ່າງບົດບັນທຶກຄວາມເຂົ້າໃຈ (MOU) ທີ່ປະກອບມີ 23 ວາລະຮ່ວມ ແລະ ແນວທາງ 5 ຂໍ້ຕົກລົງຮ່ວມກັນບໍລິຫານປະເທດ. ຕໍ່ກັບວາລະຮ່ວມດັ່ງກ່າວ ມີບາງຈຸດທີ່ຫຼາຍຝ່າຍໃຫ້ຄວາມສົນໃຈເປັນຕົ້ນແມ່ນການຟື້ນຟູປະຊາທິປະໄຕ (ສ້າງລັດຖະທໍາມະນູນສະບັບໃໝ່) ແລະ ການຮັບຮອງກົດໝາຍການແຕ່ງງານກັບເພດດຽວກັນ. ສໍາລັບການສະເໜີ ທ່ານ ພິທາ ລິ້ມຈະເລີນລັດ, ຫົວໜ້າພັກກ້າວໄກ ເປັນນາຍົກລັດຖະມົນຕີ, ຈະຕ້ອງໄດ້ຮັບສຽງສະໜັບສະໜູນຈາກ ສະມາຊິກສະພາສູງ (ສ.ວ) ອີກຢ່າງໜ້ອຍ 63 ສຽງ ລວມກັບ ສສ ທີ່ມີໃນປັດຈຸບັນ 313 ສຽງ ຈຶ່ງຈະສາມາດເປັນນາຍົກລັດຖະມົນຕີໄດ້.

- ວັນທີ 14 ພຶດສະພາ 2023, ຄະນະລັດຖະບານອິນເດຍ ໄດ້ດໍາເນີນການເລືອກຕັ້ງທ້ອງຖິ່ນ ທີ່ລັດ Karnakata, ເຊິ່ງເປັນລັດທີ່ໃຫຍ່ຂອງອິນເດຍ ແລະ ມີປະຊາກອນປະມານ 60 ລ້ານກວ່າຄົນ. ການເລືອກຕັ້ງຄັ້ງນີ້ ມີປະຊາຊົນໃນລັດດັ່ງກ່າວ ອອກມາໃຊ້ສິດເປັນຈໍານວນຫຼວງຫຼາຍ ຖ້າທຽບໃສ່ກັບການເລືອກຕັ້ງທ້ອງຖິ່ນຄັ້ງທີ່ຜ່ານມາ. ຜົນການເລືອກຕັ້ງປະກົດວ່າ ພັກຄອງເກຣດ (ພັກຝ່າຍຄ້ານ) ໄດ້ຮັບຄະແນນສຽງສະໜັບສະໜູນ 114 ບ່ອນນັ່ງ ຈາກທັງໝົດ 224 ບ່ອນນັ່ງ. ສ່ວນ ພັກປະຊາຊົນອິນເດຍ (ພັກກໍາອໍານາດ) ຂອງ ທ່ານ ໂມດີ ໄດ້ຮັບຄະແນນສຽງສະໜັບສະໜູນພຽງ 65 ທີ່ນັ່ງ, ເຊິ່ງຖືວ່າເປັນຄັ້ງທີ 2 ໃນຮອບ 6 ເດືອນ ທີ່ພັກປະຊາຊົນອິນເດຍ ບໍ່ສາມາດເອົາຊະນະພັກຄອງເກຣດ ໃນການເລືອກຕັ້ງທ້ອງຖິ່ນ. ແຕ່ເຖິງຢ່າງໃດກໍຕາມ, ທ່ານ ໂມດີ, ປະທານນາທິບໍດີອິນເດຍ ໄດ້ໃຫ້ຄໍາໝັ້ນສັນຍາຕໍ່ສະມາຊິກພັກຂອງຕົນ ແລະ ປະຊາຊົນອິນເດຍ ວ່າ ຈະນໍາພາພັກປະຊາຊົນອິນເດຍ ເອົາຊະນະໃນການເລືອກຕັ້ງທົ່ວໄປໃນປີ 2024 ເພື່ອຮັກສາຕໍາແໜ່ງເປັນສະໄໝທີ 3.

- ການປະທະກັນລະຫວ່າງກອງທັບຊູດັງ ແລະ ກອງທະຫານສະໜັບສະໜູນເຄື່ອນທີ່ໄວ (RSF) ໃນນະຄອນຫຼວງຄາຕູມ ແຕ່ວັນທີ 15/04/2023 ເປັນຕົ້ນມາ ໄດ້ສ້າງຄວາມເສຍຫາຍແກ່ຊີວິດ ແລະ ຊັບສິນຂອງຊູດັງມະຫາສານ. ປັດຈຸບັນ, ມີຜູ້ເສຍຊີວິດ ປະມານ 550 ຄົນ, ບາດເຈັບ 4.900 ກວ່າຄົນ, ປະຊາຊົນ 100.000 ຄົນ ອົບພະຍົບອອກຈາກປະເທດ, ປະຊາຊົນຫຼາຍກວ່າ 330.000 ຄົນ ເຄື່ອນຍ້າຍອອກຈາກນະຄອນຫຼວງຄາຕູມໄປເມືອງອື່ນໆພາຍໃນປະເທດ. ແນວໃດກໍຕາມ, ທັງສອງຝ່າຍ ໄດ້ຕົກລົງຢຸດຍິງຊົ່ວຄາວຫຼາຍມື້ຕິດຕໍ່ກັນ ຕາມການຮຽກຮ້ອງຂອງປະຊາຄົມໂລກ ໃນການຊ່ວຍເຫຼືອດ້ານມະນຸດຊະທໍາ. ຫຼາຍປະເທດ ກໍໄດ້ອົບພະຍົບພົນລະເມືອງຂອງຕົນອອກຈາກຊູດັງ ເຊັ່ນ: ອັງກິດ, ອາເມລິກາ, ຝຣັ່ງ, ເຢຍລະມັນ, ສປ ຈີນ, ລັດເຊຍ, ໄທ, ຍີ່ປຸ່ນ ແລະ ອື່ນໆ.

**2). ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ**

ເຫດການສໍາຄັນ ໃນຄວາມຂັດແຍ່ງລະຫວ່າງອູແກຣນ ແລະ ລັດເຊຍ ໃນເດືອນນີ້ ແມ່ນ ກຸ່ມທະຫານຮັບຈ້າງແວັກເນີ ພາຍໃຕ້ການຊີ້ນໍາຂອງກອງທັບລັດເຊຍ ສາມາດຍຶດເມືອງ Bakhmut, ເມືອງຍຸດທະສາດຂອງພາກພື້ນ Donbass) ທາງພາກຕາເວັນອອກຂອງ ອູແກຣນ ໄດ້ຢ່າງສົມບູນ ໃນວັນທີ 20 ພຶດສະພາ 2023. ກອງທັບລັດເຊຍຍັງໄດ້ໃຊ້ເຄື່ອງບິນບໍ່ມີຄົນຂັບ 54 ລໍາ ໂຈມຕີໃສ່ນະຄອນຫຼວງ ກຽບ ແລະ ພື້ນທີ່ ອ້ອມຮອບ ຂອງອູແກຣນ ໃນວັນທີ 27 ພຶດສະພາ 2023 ຜ່ານມາ ເຮັດໃຫ້ອູແກຣນ ໄດ້ຮັບຄວາມເສຍຫາຍພໍສົມຄວນ ເປັນຕົ້ນ ໃນເດືອນ 04/2023 ກອງທັບອູແກຣນ ສູນເສຍທະຫານປະມານ 15.000 ຄົນ, ລົດຖັງ ແລະ ລົດຫຸ້ມເກາະ 430 ຄັນ, ເຮືອບິນບໍ່ມີຄົນຂັບ (UAV) 277 ລໍາ, ເຮືອບິນທະຫານ 8 ລໍາ ຖືກທໍາລາຍ. ນອກຈາກນັ້ນ, ວັນທີ 09/05/2023, ລັດເຊຍ ໄດ້ຈັດພິທີສະເຫຼີມສະຫຼອງວັນໄຊຊະນະຂອງສະຫະພາບໂຊວຽດເໜືອຟາດສິດເຢຍລະມັນ ໃນສົງຄາມໂລກຄັ້ງທີ II ຄົບຮອບ 78 ປີ, ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ກ່າວສູນທອນພົດວ່າ ສົງຄາມທີ່ແທ້ຈິງໄດ້ເກີດກັບລັດເຊຍອີກຄັ້ງ, ໂລກມີການປ່ຽນແປງຄັ້ງສໍາຄັນ ແຕ່ລັດເຊຍພ້ອມທີ່ຈະຕໍ່ສູ້ເພື່ອປົກປ້ອງປະຊາຊົນຂອງຕົນ, ຕາເວັນຕົກຕ້ອງການເຫັນລັດເຊຍຫຼົ້ມສະຫຼາຍໂດຍການນໍາໃຊ້ອູແກຣນເປັນເຄື່ອງມື. ໃນພິທີສະເຫຼີມສະຫຼອງດັ່ງກ່າວ, ລັດເຊຍໄດ້ເຊື້ອເຊີນ 07 ຜູ້ນໍາປະເທດອະດີດສະຫະພາບໂຊວຽດເຂົ້າຮ່ວມເຊັ່ນ: ອາກເມນີ, ເບລາຣຸດຊີ, ກາຊັກສະຖານ, ກຽກກິດສະຖານ, ຕັດຈິກິດສະຖານ, ອຸດສະເບກິດສະຖານ ແລະ ຕວັກເມນິດສະຖານ.

ສຳລັບການໂຈມຕີລັດເຊຍ ຈາກຝ່າຍກົງກັນຂ້າມ, ໃນໄລຍະຕົ້ນເດືອນ ພຶດສະພາຜ່ານມາ, ໄດ້ມີໂດຣນ ຈຳນວນ 02 ລຳ ພະຍາຍາມໂຈມຕີທຳນຽບປະທານາທິບໍດີລັດເຊຍ ແຕ່ກອງທັບລັດເຊຍສາມາດທຳລາຍໂດຣນດັ່ງກ່າວໄດ້ ແລະວ່າ ເປັນການກໍ່ການຮ້າຍ ແລະ ພະຍາຍາມລອບສັງຫານປະທານາທິບໍດີລັດເຊຍ.

ອາເມລິກາ ແລະ ຕາເວັນຕົກ ຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນຢ່າງຕໍ່ເນື່ອງ, ໃນນັ້ນ ອີຢູ ໄດ້ອະນຸມັດງົບປະມານ 01 ຕື້ເອີໂຣ ເພື່ອຈັດຊື້ລູກປືນໃຫຍ່ໃຫ້ ອູແກຣນ. ອາເມລິກາ ປະກາດຊ່ວຍເຫຼືອອູແກຣນ ຄັ້ງທີ 37 ມີມູນຄ່າ 375 ລ້ານໂດລາ ປະກອບດ້ວຍລູກປືນໃຫຍ່, ລູກສອນໄຟ HIMARS, Hydra 70 ແລະ ລົດບັນທຸກໜັກ. ອັງກິດ ຈະເພີ່ມການຊ່ວຍເຫຼືອລະບົບປ້ອງກັນທາງອາກາດຫຼາຍຮ້ອຍລູກ, ລູກສອນໄຟພິໄສໄກ (Storm Shadow), ລົດຖັງ, ລົດຫຸ້ມເກາະ, ໂດຣນ ແລະ ຊ່ວຍຝຶກຊ້ອມໃຫ້ທະຫານອູແກຣນ, ສ່ວນ ເຢຍລະມັນ ໄດ້ປະກາດຊ່ວຍເຫຼືອເປັນງົບປະມານ 2,7 ຕື້ເອີໂຣ (2,95 ຕື້ໂດລາ) ປະກອບດ້ວຍລົດຖັງ Leopard-1 ຈຳນວນ 30 ຄັນ, ລົດຫຸ້ມເກາະ, ລະບົບປ້ອງກັນທາງອາກາດ, ປືນໃຫຍ່, ລູກປືນໃຫຍ່ ແລະ ໂດຣນ ໃຫ້ ອູແກຣນ ໃນລະຫວ່າງທີ່ ທ່ານ Volodymyr Zelensky ເດີນທາງຢ້ຽມຢາມເຢຍລະມັນຢ່າງເປັນທາງການໃນວັນທີ 14/05/2023 ຜ່ານມາ. ຫຼັງຈາກນັ້ນ, ເດີນທາງຕໍ່ຢ້ຽມຢາມຝຣັ່ງ ແລະ ພົບປະກັບ ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ, ຊຶ່ງຝຣັ່ງຈະສົ່ງລົດຖັງ, ລົດຫຸ້ມເກາະຫຼາຍ 10 ຄັນ ໃຫ້ ອູແກຣນຕື່ມອີກ.

ທ່າມກາງສະຖານະການໂລກໃນປັດຈຸບັນ ສັງເກດເຫັນວ່າ ມີຫຼາຍປະເທດໄດ້ໃຊ້ງົບປະມານມະຫາສານເຂົ້າໃນການທະຫານ, ຊຶ່ງສະຖາບັນຄົ້ນຄວ້າສັນຕິພາບໂລກ Stockholm (SIPRI) ໄດ້ລາຍງານວ່າການໃຊ້ງົບປະມານທາງທະຫານຂອງໂລກໃນປີ 2022 ສູງເປັນປະຫວັດສາດ, ສູງສຸດແມ່ນເອີຣົບ ເພີ່ມຂຶ້ນ 13%, ໃນນັ້ນ ແຟງລັງ ເພີ່ມຂຶ້ນ 36%, ລິດຕົວນີ 12%, ໂປໂລຍ 11%. ສ່ວນອາເມລິກາ ນຳໃຊ້ງົບປະມານທາງການທະຫານ 8,77 ແສນລ້ານໂດລາ ກວມເອົາ 39% ຂອງໂລກ, ສປ ຈີນ 2,92 ແສນລ້ານໂດລາ ກວມ 13% ຂອງໂລກ. ອູແກຣນ ນຳໃຊ້ງົບ 44 ຕື້ໂດລາ ກວມເອົາ 1/3 ຂອງ GDP ຂອງປະເທດ ເພີ່ມຂຶ້ນ 640% ທຽບໃສ່ປີ 2021.

**3). ກອງປະຊຸມສຸດຍອດຜູ້ນຳກຸ່ມ G7**

ໃນລະຫວ່າງວັນທີ 19-21/05/2023, ຍີ່ປຸ່ນ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳກຸ່ມ G7 ທີ່ ເມືອງຮີໂຣຊິມາ ມີຜູ້ນຳຂອງ ຍີ່ປຸ່ນ, ອາເມລິກາ, ຝຣັ່ງ, ອັງກິດ, ເຢຍລະມັນ, ອີຕາລີ ແລະ ການາດາ; ຜູ້ນຳຂອງອູແກຣນ ແລະ ຕົວແທນຈາກປະເທດທີ່ຖືກເຊີນຈຳນວນໜຶ່ງເຊັ່ນ: ສະຫະພາບເອີຣົບ, ອິນເດຍ, ອົດສະຕຣາລີ, ບຣາຊິນ, ສ. ເກົາຫຼີ, ອິນໂດເນເຊຍ, ສສ ຫວຽດນາມ ເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາລືກັນຫຼາຍບັນຫາ ເປັນຕົ້ນແມ່ນ ບັນຫາຂໍ້ຂັດແຍ່ງອູແກຣນ-ລັດເຊຍ, ການປົດອາວຸດນິວເຄຼຍ, ເສດຖະກິດໂລກ, ການປ່ຽນແປງຂອງສະພາບອາກາດ, ພະລັງງານ, ສິ່ງແວດລ້ອມ, ຄວາມໝັ້ນຄົງທາງດ້ານອາຫານ, ສຸຂະພາບ ແລະ ການຮ່ວມມືກັບສາກົນ. ພ້ອມດຽວກັນ, ກອງປະຊຸມໄດ້ອອກຖະແຫຼງການຮ່ວມ ທີ່ມີເນື້ອໃນສຳຄັນບາງຈຸດຄື: ສືບຕໍ່ຂວ້ຳບາດລັດເຊຍ ແລະ ສະໜັບສະໜູນອູແກຣນ, ປົດອາວຸດນິວເຄຼຍ ສປປ ເກົາຫຼີ, ສະໜັບສະໜູນຂົງເຂດອິນໂດ-ປາຊີຟິກ ເປັນຂົງເຂດເສລີ ແລະ ເປີດກວ້າງ, ບັນຫາໄຕ້ຫວັນ ແລະ ອື່ນໆ.

ສປ ຈີນ ແລະ ລັດເຊຍ ໄດ້ຕອບໂຕ້ກຸ່ມ G7 ວ່າ: ນະໂຍບາຍ ແລະ ຖະແຫຼງການຂອງພວກເຂົາ ເປັນການແຊກແຊງ, ສ້າງຄວາມບໍ່ສະຫງົບ ໃນທຸກຂົງເຂດ-ພາກພື້ນ ສົ່ງຜົນກະທົບ ຕໍ່ການຮ່ວມມື ພັດທະນາເສດຖະກິດ ແລະ ອື່ນໆຂອງມວນມະນຸດ ໃນທົ່ວໂລກ; ຮຽກຮ້ອງໃຫ້ກຸ່ມ G7 ເຄົາລົບອະທິປະໄຕ ຂອງປະເທດອື່ນ, ຢຸດຕິການແຜ່ອຳນາດຄອບງຳໂລກຂົ້ວດຽວ.

**4). ສະພາບການ ໃນຂົງເຂດຕາເວັນອອກກາງ**

ວັນທີ 03-04/05/2023, ທ່ານ Ebrahim Raisi, ປະທານາທິບໍດີອີຣານ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງໄດ້ຢ້ຽມຢາມຊີຣີ ຢ່າງເປັນທາງການຄັ້ງທຳອິດນັບຕັ້ງແຕ່ເກີດສົງຄາມກາງເມືອງໃນຊີຣີ ໃນປີ 2011 ເປັນຕົ້ນມາ ເພື່ອປຶກສາຫາລືຄວາມຂັດແຍ່ງໃນຊີຣີ, ດ້ານເສດຖະກິດ ແລະ ຄາດວ່າຈະເຊັນສັນຍາຮ່ວມມືນຳກັນຫຼາຍສະບັບ.

ວັນທີ 07/05/2023, ບັນດາລັດຖະມົນຕີຕ່າງປະເທດຂອງກຸ່ມສັນນິບາດອາຣັບ (Arab League) ໄດ້ຈັດກອງປະຊຸມວິສາມັນຂຶ້ນ ທີ່ ນະຄອນຫຼວງ Cairo ຂອງ ອີຢິບ, ຊຶ່ງໄດ້ຕົກລົງໃຫ້ຊີຣີກັບມາເປັນສະມາຊິກຂອງກຸ່ມ

ສັນນິບາດອາຣັບ, ພາຍຫຼັງທີ່ຢຸດການໃຫ້ສະຖານະສະມາຊິກ ຕັ້ງແຕ່ປີ 2011 ໃນໄລຍະທີ່ຊີຣີເລີ່ມເກີດຄວາມຂັດແຍ່ງຈົນກາຍເປັນສົງຄາມກາງເມືອງ.

ວັນທີ 8 ເມສາ 2023, ຄະນະຜູ້ແທນຈາກ ອາຣັບບີ ຊາອຸດິດ ແລະ ຜູ້ແທນໂອມານ ໄດ້ເດີນທາງໄປ ເຢເມນ ເພື່ອປຶກສາຫາລືກ່ຽວກັບການຢຸດຍິງຖາວອນ ໃນເຢເມນ, ສົງຄາມກາງເມືອງ ທີ່ແກ່ຍາວ ມາແຕ່ປີ 2014. ຊຶ່ງກ່ອນໜ້ານີ້, ອາຣັບບີ ຊາອຸດິດ ແລະ ໂອເມນ ຮ່ວມກັນສະໜັບສະໜູນລັດຖະບານເຢເມນ ເພື່ອຕໍ່ສູ້ກັບກຸ່ມຮູຕີ ໃນເຢເມນ ທີ່ອ້າງວ່າ ອີຣານ ໃຫ້ການສະໜັບສະໜູນກຸ່ມດັ່ງກ່າວ. ການເຄື່ອນໄຫວດັ່ງກ່າວ ສະທ້ອນເຖິງບົດບາດຂອງ ສປ ຈີນ ທີ່ເປັນສື່ກາງໃນການເຈລະຈາ ໃຫ້ ອາຣັບບີ ຊາອຸດິດ ແລະ ອີຣານ ກັບມາສ້າງສາຍພົວພັນທາງການທູດນຳກັນອີກ ພາຍຫຼັງຕັດສາຍພົວພັນການທູດລະຫວ່າງກັນ ມາແຕ່ປີ 2019. ນອກຈາກນັ້ນ, ວັນທີ 18 ເມສາ 2023, ລັດຖະມົນຕີຕ່າງປະເທດ ອາຣັບບີ ຊາອຸດິດ ຍັງໄດ້ເດີນທາງຢ້ຽມຢາມຊີຣີ ເພື່ອປຶກສາຫາລືກ່ຽວກັບບັນຫາຄວາມໝັ້ນຄົງໃນພາກພື້ນຕາເວັນອອກກາງ, ເວົ້າລວມ ເວົ້າສະເພາະ ແມ່ນການຮ່ວມກັນແກ້ໄຂສົງຄາມກາງເມືອງໃນຊີຣີ. ເວົ້າລວມແລ້ວ, ສະພາບໃນຕາເວັນອອກກາງ ໄລຍະນີ້ ຢູ່ໃນທ່າອ່ຽງແຫ່ງການຮ່ວມມື, ການຟື້ນຟູສາຍພົວພັນເຊິ່ງກັນ ແລະ ກັນ ເພື່ອຜົນປະໂຫຍດຮ່ວມກັນຂອງບັນດາປະເທດໃນພາກພື້ນ.

ແນວໃດກໍຕາມ, ກໍຍັງມີຄວາມຂັດແຍ່ງກັນ ໃນຂົງເຂດນີ້ ໂດຍສະເພາະແມ່ນ ອິດສະລາແອນ ແລະ ປາເລັດສະຕິນ, ເຊິ່ງວັນທີ 15/05/2023, ທາງການປາແລັດສະຕິນ ໄດ້ອອກຖະແຫຼງການຮຽກຮ້ອງໃຫ້ອິດສະຣາແອນຕ້ອງຮັບຜິດຊອບຕໍ່ສະພາບຄວາມເຄັ່ງຕຶງໃນແຫຼມກາຊາ ທີ່ເລີ່ມຂຶ້ນຮອບໃໝ່ແຕ່ວັນທີ 9/5/2023 ເປັນຕົ້ນມາ. ຍ້ອນການປະທະລະຫວ່າງອິດສະຣາແອນ ແລະ ກຸ່ມຕິດອາວຸດຈີຮັດປາແລັດສະຕິນ (PIJ) ເຮັດໃຫ້ມີຜູ້ເສຍຊີວິດ 33 ຄົນ, ບາດເຈັບ 147 ຄົນ. ການປິດດ່ານຊາຍແດນຂອງອິດສະຣາແອນ ເຮັດໃຫ້ຜູ້ບາດເຈັບບໍ່ສາມາດເຂົ້າໄປປິ່ນປົວຢູ່ໂຮງໝໍໃນເຂດເວດສະແບງ ແລະ ເຢຣູຊາເລັມ, ຊຶ່ງເປັນການລະເມີດຫຼັກການມະນຸດສະທຳຢ່າງຮ້າຍແຮງ. ນາຍົກລັດຖະມົນຕີປາແລັດສະຕິນ ຮຽກຮ້ອງໃຫ້ ສປຊ ເຂົ້າມາມີບົດບາດເພື່ອຢຸດຕິການກໍ່ອາຊະຍາກຳຕໍ່ຊາວປາແລັດສະຕິນໃນແຫຼມກາຊາ ແລະ ເຂດເວດສະແບງດັ່ງກ່າວ.

ວັນທີ 14/05/2023, ຕວັກກີ ໄດ້ຈັດການເລືອກຕັ້ງປະທານາທິບໍດີທົ່ວປະເທດ, ຊຶ່ງຜົນຂອງການເລືອກຕັ້ງ ທ່ານ Recep Tayyip Erdogan, ປະທານາທິບໍດີຕວັກກີ, ພັກ AKP ໄດ້ຮັບຄະແນນສຽງສະໜັບສະໜູນ 49,2%; ທ່ານ Kemal Kilicdaroglu, ຜູ້ນຳພັກຝ່າຍຄ້ານ, ພັກ CHP ໄດ້ 45% ແລະ ທ່ານ Sinan Ogan, ພັກ Independence ໄດ້ 5,3%. ຕາມກົດໝາຍການເລືອກຕັ້ງຂອງຕວັກກີ ຈາກທີ່ບໍ່ມີຜູ້ສະໝັກໄດ້ຄະແນນເຖິງ 50% ຈຶ່ງໄດ້ຈັດການເລືອກຕັ້ງຮອບ 02 ຂຶ້ນໃນວັນທີ 28/05/2023 ໂດຍຜົນການເລືອກຕັ້ງ, ທ່ານ Erdogan ໄດ້ຮັບໄຊຊະນະ ແລະ ຖືກເລືອກເປັນປະທານາທິບໍດີຂອງຕວັກກີ ອີກວາລະໜຶ່ງ ດ້ວຍຄະແນນສຽງ 52.14%, ສ່ວນ ທ່ານ Kemal Kilicdaroglu, ຜູ້ນຳພັກຝ່າຍຄ້ານ ໄດ້ 47.86%.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# II. ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ

## 1. ຄະນະຜູ້ແທນຂັ້ນສູງພັກລັດເຊຍເອກະພາບ ຢ້ຽມຢາມ ສປປ ລາວ



ຄະນະຜູ້ແທນຂັ້ນສູງຂອງພັກລັດເຊຍເອກະພາບ ນຳໂດຍ ສະຫາຍ ດິມິຕຣີ ເມັດເວເດັບ, ປະທານພັກລັດເຊຍເອກະພາບ, ຮອງປະທານສະພາຄວາມໝັ້ນຄົງ ແຫ່ງ ສະຫະພັນລັດເຊຍ ພ້ອມດ້ວຍຄະນະ ໄດ້ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ, ໃນວັນທີ 23 ພຶດສະພາ 2023. ຄະນະຜູ້ແທນຂັ້ນສູງຂອງພັກລັດເຊຍເອກະພາບ ໄດ້ພົບປະເຮັດວຽກຮ່ວມກັບ ສະຫາຍເລຂາທິການໃຫຍ່ພັກ ປປ ລາວ ແລະ ການນຳລາວ ຈຳນວນໜຶ່ງ. ຝ່າຍລາວ ໄດ້ຕີລາຄາສູງການມາຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນຄັ້ງນີ້, ຊຶ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ລັດເຊຍ ໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ; ໄດ້ແຈ້ງໃຫ້ຊາບ ສະພາບການທີ່ພົ້ນເດັ່ນ ຂອງ ສປປ ລາວ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX; ໄດ້ແລກປ່ຽນບົດຮຽນໃນການຊີ້ນຳນຳພາຂອງພັກ ປປ ລາວ ໃນໄລຍະທີ່ຜ່ານມາ, ແລກປ່ຽນທັດສະນະຕໍ່ສະພາບການພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີຄວາມສົນໃຈ.

ສະຫາຍ ດິມິຕຣີ ເມັດເວເດັບ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບອັນອົບອຸ່ນ ທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບຂອງບັນດາການນຳຂັ້ນສູງຂອງພັກ ແລະ ລັດ ແຫ່ງ ສປປ ລາວ ໃນຄັ້ງນີ້; ໄດ້ປຶກສາຫາລື ກ່ຽວກັບ ທິດທາງການພົວພັນຮ່ວມມື ລະຫວ່າງ ສອງພັກໃນຕໍ່ໜ້າ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ; ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດອັນໃຫຍ່ຫຼວງຮອບດ້ານ ທີ່ຍາດມາໄດ້ຕະຫຼອດໄລຍະຜ່ານມາ ໂດຍພາຍໃຕ້ການນຳພາອັນຖືກຕ້ອງຂອງພັກ ປປ ລາວ ແລະ ສະແດງຄວາມເຊື່ອໝັ້ນວ່າ ປະຊາຊົນລາວ ຈະສືບຕໍ່ໄດ້ຮັບຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຮັດໃຫ້ປະເທດຊາດມີຄວາມມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

## 2. ຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມ ທີ່ນະຄອນສີ້ງຊິ້ງ, ສປ ຈີນ




ໃນລະຫວ່າງວັນທີ 16-19 ພຶດສະພາ 2023, ຄະນະຜູ້ແທນຂອງ ພັກ ປປ ລາວ ນໍາໂດຍ ສະຫາຍ ນາງ ສູນທອນ ໄຊຍະຈັກ, ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມ "ໜຶ່ງແລວ ໜຶ່ງເສັ້ນທາງ ເພື່ອການພັດທະນາເຊື່ອມໂຍງທາງບົກ-ທາງທະເລ ປະຈໍາປີ 2023" ຢູ່ນະຄອນສີ້ງຊິ້ງ, ສປ ຈີນ, ເຊິ່ງການຈັດກອງປະຊຸມຄັ້ງນີ້ ພໍດີເປັນໂອກາດຄົບຮອບ 10 ປີ ຂອງ ຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ" ທີ່ປະທານປະເທດ ສີ ຈິ້ນຜິງ ຂອງຈີນ ປະກາດອອກໃນປີ 2013 ຜ່ານມາ.

ໃນໂອກາດເຂົ້າຮ່ວມກອງປະຊຸມດັ່ງກ່າວ, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ກ່າວຄໍາເຫັນ ໂດຍໄດ້ຍົກໃຫ້ເຫັນຄວາມໝາຍສໍາຄັນຂອງ ຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ" ຕໍ່ ສປປ ລາວ ໂດຍສະເພາະແມ່ນ ການເຊື່ອມໂຍງຍຸດທະສາດ "ຫັນຈາກປະເທດບໍ່ມີຊາຍແດນຕິດຈອດກັບທະເລ ເປັນປະເທດແຫ່ງການເຊື່ອມໂຍງເຊື່ອມຈອດ" ຂອງ ສປປ ລາວ ເຂົ້າກັບຂໍ້ລິເລີ່ມດັ່ງກ່າວ, ທັງໄດ້ຍົກໃຫ້ເຫັນ ບັນດາກົນໄກການຮ່ວມມື ທີ່ ສປປ ລາວ ໄດ້ເຂົ້າຮ່ວມ ແລະ ຜົນປະໂຫຍດທີ່ ສປປ ລາວ ໄດ້ຮັບຈາກຂອບການຮ່ວມມືດັ່ງກ່າວ, ເຊິ່ງອັນພົ້ນເດັ່ນທີ່ສຸດ ແມ່ນໂຄງການທາງລົດໄຟລາວ-ຈີນ ທີ່ໄດ້ນໍາເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນລາວ ແລະ ກາຍເປັນທ່າແຮງສໍາຄັນ ໃນການພັດທະນາເສດຖະກິດຂອງ ສປປ ລາວ ໃນປັດຈຸບັນ; ສະຫາຍ ນາງ ສູນທອນ ໄຊຍະຈັກ ຍັງໄດ້ເຂົ້າຮ່ວມພິທີເປີດ ເວທີສົນທະນາການຮ່ວມມືສາກົນ ຊ່ອງທາງໃໝ່ໃນການເຊື່ອມໂຍງທາງບົກ-ທາງທະເລ ຄັ້ງທີ 5 ແລະ ກອງປະຊຸມສົ່ງເສີມການຄ້າ-ການລົງທຶນສາກົນ ພາກຕາເວັນຕົກຈີນ.

ໃນໂອກາດຢ້ຽມຢາມດັ່ງກ່າວ, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ພົບປະກັບ ສະຫາຍ ຢວນ ເຈ່ຍຈຸນ, ກໍາມະການກົມການເມືອງສູນກາງພັກ, ເລຂາພັກນະຄອນສີ້ງຊິ້ງ, ເຊິ່ງ ສະຫາຍ ໄດ້ຕີລາຄາສູງ ຕໍ່ ການກະກຽມກອງປະຊຸມຂອງ ນະຄອນສີ້ງຊິ້ງ, ຜົນສໍາເລັດຂອງການດໍາເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ໃນທ້າຍປີ 2022 ຜ່ານມາ ແລະ ສະແດງຄວາມຊົມເຊີຍຕໍ່ການຈັດຕັ້ງຜັນຂະຫຍາຍ ມະຕິຂອງກອງປະຊຸມໃຫຍ່ດັ່ງກ່າວ ໃນນະຄອນສີ້ງຊິ້ງ; ທັງໄດ້ແຈ້ງສະພາບພົ້ນເດັ່ນພາຍໃນຂອງລາວ ໃຫ້ຝ່າຍຈີນຊາບ, ໄດ້ຕີລາຄາຜົນຂອງການຮ່ວມມືສອງຝ່າຍ ໃນໄລຍະຜ່ານມາ ແລະ ໄດ້ແລກປ່ຽນຄໍາຄິດເຫັນນໍາຝ່າຍຈີນ ກ່ຽວກັບ ທິດທາງໃນການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ກໍຄື ລະຫວ່າງ ສປປ ລາວ ກັບ ນະຄອນສີ້ງຊິ້ງ ຂອງ ສປ ຈີນ ໃນຕໍ່ໜ້າ.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1.ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາ ວັນສຳຄັນຂອງພັກ, ຂອງຊາດ




ວັນທີ 25 ພຶດສະພາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດປາຖະກະຖາເຜີຍແຜ່ 4 ເອກະສານສຳຄັນ ເຊັ່ນ: ວັນໄຊຊະນະຂອງສະຫະພາບໂຊວຽດ ເໜືອຟາດຊິດເຢຍລະມັນ ໃນສົງຄາມໂລກຄັ້ງທີ II ຄົບຮອບ 78 ປີ (9.5.1954-9.5.2023); ວັນໄຊຊະນະບັ້ນຣົບດຽນບຽນຟູ ຄົບຮອບ 69 ປີ (7.5.1954-7.5.2023); ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນຊຽງຂວາງ ຄົບຮອບ 64 ປີ (18.5.1959-18.5.2023) ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາການນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ (24.5.1960-24.5.2023), ໂດຍໃຫ້ກຽດເຜີຍແຜ່ ແລະ ເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ເຊິ່ງມີຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ ຈຳນວນ 124 ສະຫາຍ.

ສະຫາຍ ທອງສະຫວັນ ພົມວິຫານ ໄດ້ເນັ້ນວ່າ ໄຊຊະນະເໜືອຟາດຊິດເຢຍລະມັນ ຂອງ ສ.ໂຊວຽດ ໄດ້ສົ່ງຜົນສະທ້ອນໃຫ້ແກ່ການປະຕິວັດຢູ່ໃນໂລກ, ໄດ້ສ້າງເງື່ອນໄຂໃຫ້ແກ່ຂະບວນການປົດປ່ອຍຊາດຢູ່ບັນດາປະເທດທີ່ເປັນຫົວເມືອງຂຶ້ນ ຈັບມືກັນລຸກຂຶ້ນຕໍ່ສູ້ຍາດເອົາຄວາມເປັນເອກະລາດມາໃຫ້ຊາດຕົນ; ສະແດງໃຫ້ເຫັນເຖິງຄວາມສາມັກຄີອັນແໜ້ນແຟ້ນ, ເສຍສະຫຼະ ແລະ ຄວາມຈົງຮັກພັກດີຕໍ່ຊາດ ກໍຄືພັນທະສາກົນຂອງກອງທັບແດງ ແລະ ປະຊາຊົນໂຊວຽດ. ພ້ອມນັ້ນ, ຍັງໄດ້ສົ່ງຜົນສະທ້ອນອັນໃຫຍ່ຫຼວງໃຫ້ແກ່ການປະຕິວັດຢູ່ອິນດູຈີນ ແລະ ກ້າວຂຶ້ນຕີເອົາຊະນະກັບພວກລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່. ສ່ວນ ວັນແຫ່ງໄຊຊະນະດຽນບຽນຟູ ແມ່ນຄວາມອົງອາດກ້າຫານຂອງປະຊາຊົນຫວຽດນາມ ຕໍ່ສູ້ຕ້ານກັບພວກລ່າເມືອງຂຶ້ນແບບເກົ່າ, ແມ່ນໄຊຊະນະທີ່ສະຫວ່າງສະໄຫວທີ່ສຸດໃນປະຫວັດສາດການຕໍ່ສູ້ຂອງປະຊາຊົນຫວຽດນາມ ຕ້ານການຮຸກຮານຂອງຈັກກະພັດ ແລະ ໄດ້ຖືກບັນທຶກເຂົ້າໃນປະຫວັດສາດຂອງຊາດ ແລະ ຂອງໂລກຢູ່ໃນສະຕະວັດທີ 20; ຮູ້ໜູນໃຊ້ກຳລັງປະກອບອາວຸດທົ່ວປວງຊົນ ເພື່ອເຮັດສົງຄາມປະຊາຊົນ; ສະແດງໃຫ້ເຫັນຄວາມສາມັກຄີຮ່ວມສຳພັນສູ້ຣົບຂອງ 3 ຊາດ ອິນດູຈີນ; ຮັບຮູ້ຄວາມເປັນເອກະລາດແຫ່ງຊາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຫວຽດນາມ, ລາວ ແລະ ກຳປູເຈຍ;

ໄຊຊະນະດຽນບຽນຟູ ແມ່ນໜຶ່ງໃນບັນດາປັດໄຈ ແລະ ໝາກຜົນຂອງຄວາມສາມັກຄີພິເສດ ແລະ ການຮ່ວມສຳພັນສູ້ຮົບ ລະຫວ່າງ ລາວ-ຫວຽດນາມ ໃນການຕ້ານສັດຕູຄືວດຽວກັນ, ປະສານສົມທົບ ແລະ ຊ່ວຍໜູນເຊິ່ງກັນແລະກັນ.

ໃນຕອນທ້າຍ, ສະຫາຍ ຫົວໜ້າ ຄຕພ ໄດ້ຍົກໃຫ້ເຫັນປະຫວັດສາດ ແລະ ມູນເຊື້ອການຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ແລະ ການໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນຳພັກ ເຊິ່ງສາມາດຖອດຖອນບົດຮຽນ ວ່າ ຍ້ອນມີພັກປະຊາຊົນປະຕິວັດລາວ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະ ປີຊາສາມາດຂອງພັກໂດຍມີ ປະທານ ໄກສອນ ພົມວິຫານ ເປັນເລຂາທິການໃຫຍ່ ບວກກັບຄວາມສາມັກຄີເປັນຈິດໜຶ່ງໃຈດຽວຂອງປະຊາຊົນລາວບັນດາເຜົ່າ, ຄວາມມີນ້ຳໃຈຮັກຊາດ ອັນແຮງກ້າຂອງບັນດາຜູ້ນຳ ຈຶ່ງເຮັດໃຫ້ພະນັກງານ, ສະມາຊິກພັກ ແລະ ນັກຮົບກອງພັນທີ 2 ແລະ ບັນດາທ່ານຜູ້ນຳສາມາດໂຕນອອກຈາກຄຸກໄປສູ່ເຂດປະຕິວັດໄດ້ຢ່າງປອດໄພ.

ໃນພາກບ່າຍ ຂອງວັນດຽວກັນ, ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເປັນກຽດເຜີຍແຜ່ ເອກະສານວັນກຳມະກອນສາກົນ ຄົບຮອບ 137 ປີ (1/5/1886-1/5/2023) ແລະ ມູນເຊື້ອວັນສ້າງຕັ້ງຄະນະຊາວໜຸ່ມ ປປ ລາວ ຄົບຮອບ 68 ປີ (14/04/1955-14/04/2023).

## 2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ຕ້ອນຮັບ ແລະ ພົບປະເຮັດວຽກ ກັບ ທ່ານ ລັດຖະມົນຕີຕ່າງປະເທດ ແລະ ການຄ້າ ອົດສະຕຣາລີ




ວັນທີ 16 ພຶດສະພາ 2023, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ຕ້ອນຮັບ ແລະ ພົບປະເຮັດວຽກ ກັບ ທ່ານ ນາງ ເພັນນີ ວອງ (Penny Wong), ລັດຖະມົນຕີກະຊວງການຕ່າງປະເທດ ແລະ ການຄ້າ ອົດສະຕຣາລີ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ. ທ່ານ ທອງສະຫ້ວນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງ ຕໍ່ການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຂອງຄະນະຜູ້ແທນອົດສະຕຣາລີ ໃນຄັ້ງນີ້, ຖືເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ລາວ ແລະ ອົດສະຕຣາລີ ທີ່ພວມຢູ່ໃນບັນຍາກາດແຫ່ງການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 71 ປີ. ນອກນັ້ນ, ຍັງໄດ້ມີການຕີລາຄາການຮ່ວມມືສາຍພັກ ເຊິ່ງພັກປະຊາຊົນປະຕິວັດລາວ ແລະ

ພັກແຮງງານອິດສະຕຣາລີ ກໍໄດ້ມີການພົວພັນມາກ່ອນ. ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຍັງໄດ້ສະແດງຄວາມປິຕິຊົມຊື່ນ ທີ່ເຫັນວ່າສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ລາວ-ອິດສະຕຣາລີ ໃນຕະຫຼອດໄລຍະ 71 ປີ ຜ່ານມາ ໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍເປັນກ້າວໆມາ; ພ້ອມທັງໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບພົ້ນເດັ່ນ ໃນການສ້າງສາພັດທະນາ ເສດຖະກິດ-ສັງຄົມຂອງ ສປປ ລາວ ພາຍໃຕ້ການນໍາຂອງ ພັກ ປປ ລາວ ທີ່ສາມາດຍາດໄດ້ຜົນສໍາເລັດໃນຫຼາຍດ້ານ, ໂດຍສະເພາະ ຜົນສໍາເລັດເບື້ອງຕົ້ນ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ສະໄໝທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອທີ່ມີປະສິດທິຜົນຂອງລັດຖະບານອິດສະຕຣາລີໃຫ້ແກ່ ສປປ ລາວ ໂດຍສະເພາະໃນດ້ານການສຶກສາ, ການພັດທະນາຊັບພະຍາກອນມະນຸດ, ດ້ານມະນຸດສະທໍາ, ສາທາລະນະສຸກ, ການຊ່ວຍເຫຼືອອຸປະກອນການແພດ, ຢາວັກແຊງຕ້ານພະຍາດໂຄວິດ-19, ການຮ່ວມມືດ້ານການຄ້າ-ການລົງທຶນ ແລະ ການພັດທະນາພື້ນຖານໂຄງລ່າງ ແລະ ດ້ານອື່ນໆ ໃນໄລຍະຜ່ານມາ ແລະ ຫວັງຢ່າງຍິ່ງວ່າຝ່າຍອິດສະຕຣາລີ ຈະສືບຕໍ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປ ລາວ ຕື່ມອີກໃນຕໍ່ໜ້າ.

ສອງຝ່າຍເຫັນດີສືບຕໍ່ຊຸກຍູ້ໃນການເສີມສ້າງສາຍພົວພັນສອງຝ່າຍ ແລະ ໄດ້ຮ່ວມກັນເຊັນບົດບັນທຶກສະແດງເຈດຈໍານົງຮ່ວມມື ເພື່ອສ້າງຕັ້ງສະມາຄົມມິດຕະພາບ ລາວ-ອິດສະຕຣາລີ ແລະ ອິດສະຕຣາລີ-ລາວ ແນໃສ່ເພີ່ມທະວີການພົວພັນຮ່ວມມືໃນຂອບການທູດປະຊາຊົນຂອງ 2 ປະເທດ ເພື່ອໃຫ້ໄດ້ຮັບການພັດທະນາ ແລະ ນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດລາວ ແລະ ອິດສະຕຣາລີ ກໍ່ຄືປະກອບສ່ວນເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

**3. ຄະນະຜູ້ແທນສະມາຄົມມິດຕະພາບ ລາວ - ລັດເຊຍ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສ. ລັດເຊຍ**



ຄະນະສະມາຄົມມິດຕະພາບ ລັດເຊຍ -ລາວ ນໍາໂດຍ ສະຫາຍ ປອ. ສັນຕິສຸກ ສິມມາລາວົງ, ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ຮອງປະທານສະມາຄົມມິດຕະພາບ ລາວ - ລັດເຊຍ ໄດ້ເດີນທາງເຂົ້າຮ່ວມພິທີເປີດງານວາງສະແດງຮູບພາບ ກ່ຽວກັບ ປະເທດລາວ ພາຍໃຕ້ຄໍາຂວັນ: "ປະເທດລາວ ປະເທດລ້ານຊ້າງ ແລະ ຄັນຮົ່ມສີຂາວ" ທີ່ ນະຄອນຫຼວງມົດສະກູ, ສ. ລັດເຊຍ ໂດຍການເປັນເຈົ້າພາບຮ່ວມ ຂອງ ສະມາຄົມມິດຕະພາບ ລັດເຊຍ - ລາວ ແລະ ກອງທຶນສັນຕິພາບລັດເຊຍ. ຫົວໜ້າຄະນະຜູ້ແທນສະມາຄົມມິດຕະພາບ ລາວ - ລັດເຊຍ ໄດ້ປະກອບຄໍາເຫັນໃນພິທີເປີດງານດັ່ງກ່າວໂດຍ ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ການເຊື້ອເຊີນ ແລະ ຕີລາຄາສູງຕໍ່ການ

ເອົາໃຈໃສ່ ແລະ ໃຫ້ກຽດຂອງສະມາຄົມມິດຕະພາບ ລັດເຊຍ - ລາວ ແລະ ກອງທຶນສັນຕິພາບລັດເຊຍ. ຄະນະຜູ້ແທນລາວ ຍັງໄດ້ຢ້ຽມຢາມສູນວິທະຍາສາດ ແລະ ວັດທະນະທໍາລາວ ທີ່ ນະຄອນຫຼວງມົດສະກູ ແລະ ເຂົ້າຮ່ວມງານພິທີປະທັບຕາໃສ່ສະແຕັມໄປສະນີ ເນື່ອງໃນໂອກາດຄົບຮອບ 100 ປີ ຂອງ ບໍລິສັດ ມຽດສະດູນາໂຣດນາຢາ ຄະຍິກາ (MK); ຢ້ຽມຢາມລັດວິສາຫະກິດ ລຽນປາລິກຣາຟ໌ມັດສ໌ (Lenpoligra fmash) ເພື່ອສຶກສາຄວາມເປັນໄປໄດ້ໃນການສົ່ງເສີມການຮ່ວມມືດ້ານການຄ້າ, ທຸລະກິດ Startup, ເຕັກໂນໂລຊີ ແລະ ນະວັດຕະກໍາ ພ້ອມທັງ ຊຸກຍູ້ໃຫ້ພາກທຸລະກິດ ຂອງ ນະຄອນເຊັນປີເຕີສະເບີກ ເພີ່ມທະວີການລົງທຶນໃນຂະແໜງການທີ່ສອງຝ່າຍມີຄວາມສົນໃຈ ແລະ ມີຜົນປະໂຫຍດຮ່ວມກັນ, ໂດຍສະເພາະແມ່ນ ຂະແໜງ ການທີ່ ສປປ ລາວ ມີທ່າແຮງ.

**4. ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ເຢຍລະມັນ ເຂົ້າຮ່ວມກອງປະຊຸມປຶກສາຫາລື ລະຫວ່າງ ສະມາ ຄົມມິດຕະພາບ ລາວ-ເຢຍລະມັນ ແລະ ເຢຍລະມັນ-ລາວ.**




ວັນທີ 18 ພຶດສະພາ 2023, ທີ່ ເມືອງ ຣູບປິສເຕີໂຣດ ສາທາລະນະລັດ ສະຫະພັນ ເຢຍລະມັນ, ສະມາຄົມມິດຕະພາບ ລາວ-ເຢຍລະມັນ ແລະ ສະມາຄົມມິດຕະພາບ ເຢຍລະມັນ-ລາວ ໄດ້ຈັດກອງປະຊຸມປຶກສາຫາລື ຄັ້ງທີ I ໂດຍການເປັນປະທານຮ່ວມ ຂອງ ທ່ານ ປອ ຄໍາລຽນ ພົນເສນາ, ປະທານສະມາຄົມມິດຕະພາບ ລາວ-ເຢຍລະມັນ ແລະ ທ່ານ ຣູດວິກ ນອຍເບີ, ປະທານສະມາຄົມມິດຕະພາບ ເຢຍລະມັນ-ລາວ. ກອງປະຊຸມ ໄດ້ຕີລາຄາຄືນການພົວພັນຮ່ວມມື ແລະ ການຈັດຕັ້ງປະຕິບັດກິດຈະກໍາ ຂອງສອງສະມາຄົມໃນໄລຍະຊຸມປີຜ່ານມາ ແລະ ປຶກສາຫາລືແລກປ່ຽນຄໍາຄິດເຫັນກ່ຽວກັບກົນໄກການຮ່ວມມື, ການແລກປ່ຽນຂໍ້ມູນຂ່າວສານ, ການແລກປ່ຽນຢ້ຽມຢາມເຊິ່ງກັນ ແລະ ກັນ, ສະໜັບສະໜູນຊຸກຍູ້ນັກທຸລະກິດ, ຊຸກຍູ້ການລົງທຶນ, ເຕົ້າໂຮມບັນດາອະດີດນັກສຶກສາທີ່ຮຽນຈາກ ເຢຍລະມັນ ແລະ ສົ່ງເສີມໃຫ້ປະຊາຊົນຂອງສອງປະເທດ ມີການພົວພັນຮ່ວມມື, ໄປມາຫາສູ່ກັນ ແລະ ມີການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ, ມູນເຊື້ອວັດທະນາທໍາ ແລະ ຂະນົບທໍານຽມອັນດີງາມໃຫ້ປະຊາຊົນສອງຊາດໄດ້ເຂົ້າໃຈຢ່າງກວ້າງຂວາງ. ນອກນັ້ນ, ສອງສະມາຄົມມິດຕະພາບ ຍັງໄດ້ຮ່ວມກັນລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືໃນໄລຍະ 5 ປີ (2023-2027) ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດການພົວພັນຮ່ວມມື ລະຫວ່າງສອງສະມາຄົມມິດຕະພາບໃຫ້ມີບາດກ້າວອັນໃໝ່ໃນຕໍ່ໜ້າ.

ໃນໂອກາດດັ່ງກ່າວ, ສະມາຄົມມິດຕະພາບ ລາວ-ເຢຍລະມັນ ຍັງໄດ້ມອບຫຼຽນກາມິດຕະພາບ ແລະ ໃບຍ້ອງຍໍ ໃຫ້ແກ່ສະມາຄົມມິດຕະພາບ ເຢຍລະມັນ-ລາວ ທີ່ມີຜົນງານໃນການປະກອບສ່ວນຂົນຂວາຍທຶນຮອນ ແລະ

ວັດຖຸ ມາສ້າງໂຮງຮຽນ ຢູ່ລາວ ລວມທັງປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານສະມາຄົມມິດຕະພາບ ລາວ-ເຢຍລະມັນ ໄລຍະຜ່ານມາ.

## 5. ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ເຂົ້າຮ່ວມກອງປະຊຸມປະຈຳປີ ຄັ້ງທີ XII ຂອງ ສອງ ສະມາຄົມ ມິດຕະພາບ ລາວ - ສ.ເກົາຫຼີ ແລະ ສ.ເກົາຫຼີ - ລາວ




ວັນທີ 25 ເມສາ 2023, ສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ແລະ ສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ ໄດ້ຈັດກອງປະຊຸມຮ່ວມ ຂອງ ສອງສະມາຄົມ ຄັ້ງທີ XII ຂຶ້ນທີ່ນະຄອນຫຼວງເຊອູນ, ສາທາລະນະລັດ ເກົາຫຼີ ໂດຍການເປັນປະທານຮ່ວມ ຂອງ ທ່ານ ຄຳສວຍ ແກ້ວດາລາວົງ, ປະທານ ສະມາຄົມມິດຕະພາບ ລາວ - ສ.ເກົາຫຼີ ແລະ ທ່ານ ໂອ ມິງຊວັນ, ປະທານສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ. ກອງປະຊຸມໄດ້ທົບທວນ ແລະ ຕີລາຄາໝາກຜົນການພົວພັນຮ່ວມມື ແລະ ການຈັດຕັ້ງປະຕິບັດກິດຈະກຳຂອງ ສອງສະມາຄົມໃນໄລຍະຊຸມປີຜ່ານມາ ແລະ ປຶກສາຫາລື ແລກປ່ຽນ ຄຳເຫັນກ່ຽວກັບກົນໄກການຮ່ວມມື, ການແລກປ່ຽນຂໍ້ມູນຂ່າວສານ, ການແລກປ່ຽນການຢ້ຽມຢາມເຊິ່ງກັນ ແລະກັນ ໃນຕໍ່ໜ້າ. ພິເສດ, ທັງສອງສະມາຄົມໄດ້ບັນລຸການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ໄລຍະ 5 ປີ (2023-2027) ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດການພົວພັນຮ່ວມມື ລະຫວ່າງ ສອງສະມາຄົມ ໃຫ້ມີບາດກ້າວອັນໃໝ່ໃນຕໍ່ໜ້າ.

ໂອກາດດັ່ງກ່າວ, ສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ໄດ້ປະດັບຫຼຽນກາມິດຕະພາບ ໃຫ້ແກ່ຄະນະບໍລິຫານງານສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ ຈຳນວນ 06 ທ່ານ ທີ່ມີຜົນງານໃນການປະກອບສ່ວນທຶນຮອນ ແລະ ວັດຖຸ ເຂົ້າໃນການເຄື່ອນໄຫວວຽກງານ ສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ໃນໄລຍະຜ່ານມາ.

**6. ຄະນະພົວພັນຕ່າງປະເທດສູນກາງພັກ ເປີດຊຸດການຝຶກອົບຮົມ E-Office**



ວັນທີ 02-05 ພຶດສະພາ 2023 ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເປີດຊຸດຝຶກອົບຮົມໃຫ້ແກ່ນັກຝຶກອົບຮົມ (TOT) ກ່ຽວກັບ ລະບົບຈໍລະຈອນ ແລະ ຄຸ້ມຄອງເອກະສານດ້ວຍລະບົບທັນສະໄໝ (E-Office) ພາຍໃຕ້ການເປັນປະທານຮ່ວມ ຂອງທ່ານ ບຸນຍາເດດ ໄຊຍະວົງ, ຫົວໜ້າຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ທ່ານ ປອ ທະວີສັກ ມະໂນທັມ, ຫົວໜ້າສູນບໍລິຫານລັດ ດີຈີຕອນ; ມີຫົວໜ້າພະແນກ, ຮອງພະແນກ, ວິທະຍາກອນ ຮັບເຊີນ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ນັກສຳມະນາກອນ ຈາກຄະນະພົວພັນຕ່າງປະເທດສູນກາງພັກ ທັງໝົດ 45 ສະຫາຍ ເຂົ້າຮ່ວມ.

ຈຸດປະສົງ ຂອງການຝຶກອົບຮົມດັ່ງກ່າວ, ແມ່ນເພື່ອປະຕິບັດການຜັນຂະຫຍາຍ 05 ແຜນງານ 28 ໂຄງການຂອງ ຄຕພ ໃຫ້ປະກົດຜົນເປັນຈິງ; ໂດຍສະເພາະ ເພື່ອເສີມສ້າງຄວາມຮູ້ ແລະ ຄວາມເຂົ້າໃຈ ໃນການນຳໃຊ້ລະບົບຫ້ອງການທັນສະໄໝ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມລະບຽບຫລັກການຂອງວຽກງານການຄຸ້ມຄອງເອກະສານແບບທັນສະໄໝ.

ພາຍຫຼັງສຳເລັດການຝຶກອົບຮົມ, ນັກສຳມະນາກອນ ຈະໄດ້ນຳໄປຝຶກຕໍ່ໃຫ້ພະນັກງານພາຍໃນກົມກອງຂອງຕົນ ເພື່ອພ້ອມກັນໝູນໃຊ້ລະບົບ E-Office ດັ່ງກ່າວ ເຂົ້າໃນວຽກງານຕົວຈິງຂອງຕົນໃຫ້ມີປະສິດທິພາບ ໃນຍຸກສະໄໝແຫ່ງການຫັນເປັນອຸດສະຫະກຳ 4.0 ເວົ້າລວມ, ເວົ້າສະເພາະແມ່ນການຫັນເປັນດີຈີຕອນຕາມແນວທາງທີ່ ພັກ-ລັດວາງອອກ.